# ຮ່ວມເປັນໜຶ່ງດຽວພາຍໃຕ້ໂຄງການຄັນຮົ່ມເພື່ອປົກປ້ອງແມ່ຍິງຈາກຄວາມຮຸນແຮງ

*Op-ed ຂຽນໂດຍຜູ້ຕາງໜ້າ UNFPA ປະຈຳ ສປປ ລາວ, ທ່ານ ນາງ Mariam A. Khan ແລະ ຜູ້ຕາງໜ້າ UNDP ປະຈຳ ສປປ ລາວ, ທ່ານ ນາງ Ricarda Rieger*

ຄວາມຮຸນແຮງບົນພື້ນຖານທາງເພດແມ່ນຍັງສືບຕໍ່ກີດກັນສິດທິຂອງແມ່ຍິງໃນທົ່ວໂລກໃນການດຳລົງຊີວິດແບບທີ່ມີກຽດ ແລະ ສະເໝີພາບ. 16 ວັນຂອງການເຄື່ອນໄຫວໂຄສະນາການຢຸດຕິການໃຊ້ຄວາມຮຸນແຮງຕໍ່ແມ່ຍິງແມ່ນໄດ້ເລີ່ມຕົ້ນໃນປີ 1991 ເປັນການຮຽກຮ້ອງໃຫ້ຢຸດຕິດການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ. ໃນປັດຈຸບັນແມ່ນຄົບຮອບ 30 ປີແລ້ວເຊິ່ງທຸກໆປີ ພວກເຮົາຍັງຕ້ອງມີການເຄື່ອນໄຫວໂຄສະນາການຢຸດຕິການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ.

ການເຄື່ອນໄຫວໂຄສະນາການຢຸດຕິການໃຊ້ຄວາມຮຸນແຮງຕໍ່ແມ່ຍິງນີ້ ມີຄວາມກ່ຽວຂ້ອງກັບ ສປປ ລາວ ຄືກັນກັບບ່ອນອື່ນໆໃນທົ່ວໂລກ.

ການສຶກສາຄົ້ນຄວ້າໃນປີ 2014 ເປີດເຜີຍວ່າ ຫຼາຍກວ່າ 30 ເປີເຊັນຂອງແມ່ຍິງທີ່ເຄີຍເປັນຄູ່ຮ່ວມງານໃນ ສປປ ລາວໄດ້ປະສົບກັບຄວາມຮຸນແຮງທາງຮ່າງກາຍ, ທາງເພດ ຫຼື ອາລົມຈາກຄູ່ຊີວິດເພດຊາຍໃນຕະຫຼອດຊີວິດຂອງເຂົາເຈົ້າ. ແມ່ຍິງທີ່ປະສົບກັບການລ່ວງລະເມີດທາງຮ່າງກາຍ ຫຼື ທາງເພດແມ່ນມັກຈະຫຼຸລູກ, ເກີດລູກກ່ອນກຳນົດ ຫຼື ການເອົາລູກອອກ ລວມທັງປະສົບກັບບັນຫາສຸຂະພາບຈິດເຊັ່ນ: ນອນບໍ່ຫຼັບ, ຄວາມກັງວົນ ຫຼື ຊຶມເສົ້າ. ເຖິງວ່າຈະມີຜົນກະທົບອັນຮ້າຍແຮງຂອງຄວາມຮຸນແຮງ, ແມ່ຍິງໃນຢູ່ ສປປ ລາວສ່ວນໃຫຍ່ແມ່ນຍັງມິດງຽບ. ມີແມ່ຍິງພຽງແຕ່ 2 ເປີເຊັນເທົ່ານັ້ນທີ່ລາຍງານວ່າຕົນເອງຖືກກະທຳຄວາມຮຸນແຮງ.

ດັ່ງນັ້ນ, ເປັນຫຍັງເລື່ອງນີ້ຍັງເກີດຂຶ້ນ ແລະ ເປັນຫຍັງຈຶ່ງມີການລາຍງານຕໍ່ເຈົ້າໜ້າທີ່ກ່ຽວກັບບັນຫານີ້ພຽງໜ້ອຍດຽວ?



*ພິທີເປີດສູນປົກປ້ອງແມ່ຍິງທີ່ແຂວງສະຫວັນນະເຂດ ໃນເດືອນທັນວາ 2020. ຮອງລັດຖະມົນຕີກະຊວງໄອຊີທີ, ຮອງເຈົ້າແຂວງສະຫວັນນະເຂດ, ຮອງປະທານສູນກາງສະຫະພັນແມ່ຍິງ, ເອກອັກຄະລັດຖະທູດອັງກິດປະຈຳ ສປປ ລາວ, ຜູ້ຕາງໜ້າອົງການ UNFPA ປະຈຳ ສປປ ລາວ ແລະ ປະທານສະຫະພັນແມ່ຍິງແຂວງສະຫວັນນະເຂດ.*

ສປປ ລາວ ມີກອບທາງດ້ານກົດໝາຍ ແລະ ນະໂຍບາຍທີ່ໜັກແໜ້ນ ເພື່ອຕ້ານຄວາມຮຸນແຮງບົນພື້ນຖານທາງເພດ ເຊິ່ງໄດ້ກຳນົດພັນທະຢ່າງຈະແຈ້ງຂອງແຕ່ລະຂະແໜງການໃນການປົກປ້ອງສິດຂອງແມ່ຍິງ. ແນວໃດກໍ່ຕາມ, ເມື່ອບັນດາມາດຕະຖານທາງສັງຄົມ ແລະ ວັດທະນະທຳທີ່ເປັນອັນຕະລາຍເຊິ່ງເຮັດໃຫ້ຄວາມຮຸນແຮງຕໍ່ແມ່ຍິງສາມາດເກີດຂຶ້ນໄດ້ເປັນປົກກະຕິ ແລະ ໃນບາງຄັ້ງມີການດູຖູກຜູ້ລອດຊີວິດຈາກຄວາມຮຸນແຮງ ແລະ ຖືກອອກແບບເພື່ອປ້ອງກັນເຂົາເຈົ້າ, ແມ່ຍິງສວນໃຫຍ່ແມ່ນມິດງຽບ.

ເພື່ອບັນລຸພັນທະດັ່ງກ່າວ, ພວກເຮົາທຸກຄົນໃນສັງຄົມຕ້ອງໃຊ້ວິທີການ ແລະ ປະຕິບັດຊ່ວຍກັນໃຫ້ທົ່ວສັງຄົມທີ່ພວກເຮົາຢູ່.

ການຄົ້ນຄວ້າກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງໄດ້ສະໜັບສະໜູນຢ່າງສະເໜີຕົ້ນສະເໝີປາຍໃຫ້ນໍາໃຊ້ວິທີການຫຼາຍພາກສ່ວນທີ່ປະສົມປະສານ ແລະ ປະສານສົມທົບກັນເພື່ອຕອບສະໜອງ ແລະ ສະກັດກັ້ນການໃຊ້ຄວາມຮຸນແຮງ ແລະ ພວກເຮົາສາມາດເຫັນໄດ້ວ່າມັນມີປະສິດຕິຜົນແນວໃດຕໍ່ກັບປະເທດເພື່ອນບ້ານຂອງພວກເຮົາ. ໃນປະເທດໄທ, ມີສູນ One Stop Crisis Centres ຫຼາຍກວ່າ 22,000 ແຫ່ງ ທີ່ບໍ່ພຽງແຕ່ຕອບສະໜອງຕໍ່ການຮ້ອງຂໍການສະໜັບສະໜູນເທົ່ານັ້ນ ແຕ່ຍັງເປັນການປຸກຈິດສໍານຶກ ເພື່ອປ້ອງກັນບໍ່ໃຫ້ເກີດຄວາມຮຸນແຮງຂຶ້ນໃນຂັ້ນຕົ້ນ. ໃນຂະນະດຽວກັນຢູ່ຫວຽດນາມ, ເຮືອນພັກສັນຕິພາບກໍ່ເຮັດວຽກຮ່ວມກັບໜ່ວຍງານຕອບໂຕ້ຢ່າງວ່ອງໄວ ເພື່ອສະໜອງການປະສານງານຕາມເປົ້າໝາຍ ແລະ ທັນການໃຫ້ຜູ້ລອດຊີວິດ. ການບໍລິການຫຼາຍຂະແໜງການແມ່ນຍັງໄດ້ຮັບການສະໜອງໃຫ້ໃນອິນໂດເນເຊຍ, ຕີມໍເລສເຕ, ຟີລິບປິນ ແລະ ອື່ນໆອີກ.

ຢູ່ ສປປ ລາວ, ຄະນະກໍາມະທິການແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່, ແລະ ເດັກ (NCAWMC) ແລະ ສູນກາງສະຫະພັນແມ່ຍິງລາວ (LWU) ກໍາລັງເຮັດວຽກເພື່ອຮັບຮອງເອົາວິທີການປະສົມປະສານທີ່ຄ້າຍຄືກັນ, ໂດຍມີຜູ້ຕອບໂຕ້ກ່ຽວກັບບັນຫາຄວາມຮຸນແຮງບົນພື້ນຖານທາງເພດຂອງ ທີ່ມຸ່ງໄປເຖິງການດໍາເນີນງານພາຍໃຕ້ຂອບດຽວຂອງໂຄງການຄັນຮົ່ມ.




*KOICA, LWU, UNFPA, UNDP (ໂຄງການຄັນຮົ່ມ) ຮ່ວມມືກັບ EU ດ້ວຍການເຂົ້າຮ່ວມຂອງອົງການຈັດຕັ້ງທາງສັງຄົມ ແລະ ອົງການຈັດຕັ້ງສາກົນ, ພາກເອກະຊົນ, ກຸ່ມແມ່ຍິງ ເພື່ອສະເຫຼີມສະຫຼອງວັນແມ່ຍິງສາກົນ ຄົບຮອບ 111 ປີ ເພື່ອສ້າງຈິດສໍານຶກກ່ຽວກັບຄວາມສະເໝີພາບລະຫວ່າງຍິງ-ຊາຍ, ການສ້າງຄວາມເຂັ້ມແຂງໃຫ້ແມ່ຍິງ ແລະ ຜົນກະທົບຂອງພະຍາດໂຄວິດ-19 ຕໍ່ຊີວິດແມ່ຍິງ.*

ໂດຍຜ່ານໂຄງການຄັນຮົ່ມ , UNDP ແລະ UNFPA ຮ່ວມມືກັບ KOICA, ກໍາລັງສະໜັບສະໜູນ ຄະນະກໍາມະທິການເພື່ອຄວາມກ້າວແມ່ຍິງແຫ່ງຊາດ ແລະ ສູນກາງສະຫະພັນແມ່ຍິງລາວ ເພື່ອນໍາເອົາຂະແໜງສາທາລະນະສຸກ, ສັງຄົມ, ແລະ ຍຸຕິທໍາຮ່ວມກັນ ເພື່ອບັນລຸຄວາມມຸ່ງຫວັງຂອງແຜນປະຕິບັດງານແຫ່ງຊາດ 5 ປີຄັ້ງທີສອງກ່ຽວກັບການປ້ອງກັນ ແລະ ລົບລ້າງຄວາມຮຸນແຮງຕໍ່ແມ່ຍິງ 2021-2025 (NAPEVAW). ໂຄງການ ຄັນຮົ່ມ ມີຈຸດປະສົງເພື່ອຈັດຕັ້ງປະຕິບັດຊຸດບໍລິການທີ່ຈໍາເປັນສໍາລັບແມ່ຍິງ ແລະ ເດັກຍິງ ຕໍ່ກັບຄວາມຮຸນແຮງ (ESP), ເຄື່ອງມືທີ່ໄດ້ຮັບການຍອມຮັບທົ່ວໂລກເຊິ່ງເປັນມາດຕະຖານເພື່ອຮັດແຄບຊ່ອງຫວ່າງລະຫວ່າງຄໍາໝັ້ນສັນຍາສາກົນ ແລະ ການສະໜອງການປະສານງານ ແລະ ຄຸນນະພາບການບໍລິການທີ່ຈໍາເປັນ.

ປັດໃຈຫຼັກຂອງການບັນລຸຄວາມທະເຍີທະຍານຂອງ ແຜນປະຕິບັດງານແຫ່ງຊາດ 5 ປີຄັ້ງທີສອງກ່ຽວກັບການປ້ອງກັນ ແລະ ລົບລ້າງຄວາມຮຸນແຮງຕໍ່ແມ່ຍິງ ທີ່ໄດ້ຮັບການຮັບຮອງເມື່ອບໍ່ດົນມານີ້ ເຊິ່ງສະໜັບສະໜູນໂດຍ UNFPA ແລະ KOICA, ແມ່ນການປະສານງານ ແລະ ການຮ່ວມມືຫຼາຍຂະແໜງການ. ແຜນປະຕິບັດງານແຫ່ງຊາດ 5 ປີຄັ້ງທີສອງກ່ຽວກັບການປ້ອງກັນ ແລະ ລົບລ້າງຄວາມຮຸນແຮງຕໍ່ແມ່ຍິງຮຽກຮ້ອງໃຫ້ຂະແໜງສາທາລະນະສຸກສະໜອງການບໍລິການສຸຂະພາບທີ່ຈໍາເປັນ ແລະ ມີຄຸນນະພາບແກ່ຜູ້ລອດຊີວິດຈາກຄວາມຮຸນແຮງ ຕັ້ງແຕ່ການຊ່ວຍເຫຼືອຄັ້ງທໍາອິດແລະການໃຫ້ຄໍາປຶກສາທາງດ້ານຈິດໃຈ ຈົນເຖິງການສະໜອງການລາຍງານທາງດ້ານກົດໝາຍ. ຂະແໜງຍຸຕິທໍາ

ເຕັມທີ່, ຮັບປະກັນການເຂົ້າເຖິງການຊ່ວຍເຫຼືອທາງດ້ານກົດໝາຍ, ການສືບສວນຜູ້ລອດຊີວິດ ແລະ ດຳເນີນຄະດີຂອງສານ ແລະ ຄວາມຮັບຜິດຊອບຂອງຜູ້ລະເມີດ. ພາກສ່ວນສັງຄົມຕ້ອງສະໜອງທີ່ພັກອາໄສ ແລະ ຟື້ນຟູ, ໃຫ້ບໍລິມະສິດຄວາມປອດໄພຂອງແມ່ຍິງ ແລະ ຊ່ວຍຜູ້ຫຼອດຊີວິດຈາກຄວາມຮຸນແຮງຄືນສູ່ສັງຄົມ.

ຢ່າງໃດກໍຕາມ, ຊຸດການບໍລິການທີ່ຈຳເປັນ ແລະ NAP EVAW ເປັນພຽງແຕ່ປສ່ວນໜຶ່ງຂອງໂຄງການຄັນຮົ່ມເທົ່ານັ້ນ. ພວກເຮົາທຸກຄົນມີບົດບາດເພື່ອເປີດກວ້າງການປ້ອງກັນຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກຍິງ.

ອົງການຈັດຕັ້ງສັງຄົມຕ້ອງຍຶດໝັ້ນໃນບົດບາດຂອງຕົນໃນການຕິດຕາມກວດກາຄວາມຄືບໜ້າ ແລະ ຊຸກຍູ້ການປ່ຽນແປງ. ພວກເຮົາອີງໃສ່ອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມພັດທະນາ ເພື່ອສືບຕໍ່ໃຫ້ຄວາມສຳຄັນຕໍ່ຄວາມສະເໝີພາບລະຫວ່າງຍິງ-ຊາຍ, ການສ້າງຄວາມເຂັ້ມແຂງຂອງແມ່ຍິງ, ແລະ ການລົບລ້າງຄວາມຮຸນແຮງບົນພື້ນຖານທາງເພດ ໃນການຮ່ວມມືກັບ ລັດຖະບານ ສປປ ລາວ. ອົງການຈັດຕັ້ງ, ສະຖານທີ່ເຮັດວຽກ ແລະ ຊຸມຊົນຕ້ອງໃຊ້ຄວາມອົດທົນເຮັດໃຫ້ການຈຳແນກ ແລະຄວາມຮຸນແຮງທຸກຮູບແບບເປັນສູນ. ຜູ້ນຳຊຸມຊົນ, ຜູ້ຊາຍ, ແລະ ເດັກຊາຍຕ້ອງກາຍເປັນແບບຢ່າງທີ່ດີສຳລັບຄວາມສະເໜີພາບລະຫວ່າງຍິງ-ຊາຍ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ.

ຜ່ານການເຄື່ອນໄຫວ 16 ວັນ ຢຸດຕິການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ, ພວກເຮົາຮຽກຮ້ອງໃຫ້ບັນດາພັນທະມິດຕ້ານຄວາມຮຸນແຮງບົນພື້ນຖານທາງເພດໂດຍການເຂົ້າຮ່ວມກັບພວກເຮົາໃນການປະຕິເສດທຸກຮູບແບບການຈຳແນກຕໍ່ແມ່ຍິງ ແລະ ເດັກຍິງ, ຍົກເລີກຄວາມຮຸນແຮງຕໍ່ແມ່ຍິງໃຫ້ເປັນປະຫວັດສາດ, ເຄົາລົບ, ປົກປ້ອງ ແລະ ສົ່ງເສີມສິດທິຂອງແມ່ຍິງ ແລະ ເດັກຍິງ. ຢູ່ ສປປ ລາວ ແລະ ທົ່ວໂລກ!